ຂ່າວ

# ສາມອົງການຈັດຕັ້ງ ມະຫາຊົນ ທຄຕລ ເຂົ້າຮ່ວມກິດຈະກຳ ແລ່ນ - ຍ່າງ ແລະ ມອບເງິນຊ່ວຍເຫຼືອຊາວ ເນປານ....

ວັນທີ 31/05/2015 ທີ່ຜ່ານມາ ອົງການກາແດງລາວ ຮ່ວມກັບກຸ່ມ ວີຊັນ ໄດ້ຈັດກິດຈະກຳ ແລ່ນ - ຍ່າງ ຂຶ້ນ ທີ່ບໍລິເວນເຂດແຄມຂອງ ເລີ່ມແຕ່ເວລາ 05:00 ໂມງ ຫາ 08:00 ໂມງ. ກິດຈະກຳໃນຄັ້ງນີ້ແມ່ນຈັດຂຶ້ນ ເພື່ອເປັນການກູສິນລະດົມທຶນໄປຊ່ວຍເຫຼືອປະຊາຊົນຊາວ ເນປານ ທີ່ໄດ້ຮັບຜົນກະທົບຈາກໄພພິບັດແຜ່ນດິນໄຫວຄັ້ງທີ່ຮ້າຍແຮງໃນວັນທີ: 25 /04/ 2015 ທີ່ຜ່ານມາ, ເຊິ່ງມີຜູ້ເສຍຊີວິດ ຫຼາຍກວ່າ 8,000 ຄົນ ແລະ ບາດເຈັບ 22,000 ກວ່າຄົນ ພ້ອມກັນນັ້ນຍັງເຮັດໃຫ້ ເຮືອນ - ຊານ ຂອງປະຊາຊົນໄດ້ຮັບຄວາມເສຍຫາຍຢ່າງຫຼວງຫຼາຍ.

ການ ແລ່ນ - ຍ່າງ ໃນຄັ້ງນີ້ໄດ້ເລີ່ມແຕ່ ສາມແຍກປາກປ່າສັກ ຫາ ໂຮງຮຽນ ການຊ່າງ ລາວເຢຍລະມັນ ລວມໄລຍະທາງ 7 ກິໂລແມັດ, ໂດຍມີປະຊາຊົນຈາກຫຼາຍພາກສ່ວນເຂົ້າຮ່ວມ ຫຼາຍກວ່າ 700 ຄົນ, ໜຶ່ງໃນນັ້ນກໍ່ມີສາມອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ, ກຳມະບານ) ທຄຕລ ເຊິ່ງນຳພາໂດຍຄະນະບໍລິຫານງານ ແລະ ສະມະຊິກ ຂອງສາມອົງການຈັດຕັ້ງມະຫາຊົນທີ່ສັງກັດຢູ່ ສຳນັກງານໃຫຍ່, ສາຂາ ນະຄອນຫລວງວຽງຈັນ ແລະ ສາຂາ ດົງໂດກເຂົ້າຮ່ວມ ຈຳນວນ 50 ຄົນ.






ພ້ອມດຽວກັນນັ້ນ ເພື່ອເປັນການແບ່ງເບົາຄວາມທຸກໂສກໃຫ້ແກ່ປະຊາຊົນຊາວເນປານ ທີ່ປະສົບເຄາະຮ້າຍຈາກໄພພິບັດແຜ່ນດິນໄຫວໃນຄັ້ງນີ້, ສາມອົງການຈັດຕັ້ງມະຫາຊົນ ກໍ່ຄືອຳນາດການປົກຄອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຍັງໄດ້ມອບ ເງິນຊ່ວຍເຫຼືອ ຜ່ານອົງການກາແດງລາວ ຈຳນວນ **5,390,000 ກີບ (ຫ້າລ້ານ ສາມແສນ ເກົ້າສິບພັນ ກີບ)**, ເຊິ່ງເງິນດັ່ງກ່າວແມ່ນການປະກອບສ່ວນຈາກ ອຳນາດການປົກຄອງ ທຄຕລ ຈຳນວນ **2,000,000 ກີບ** ແລະ ທຶນສົມທົບຂອງ ສາມອົງການຈັດຕັ້ງມະຫາຊົນ **3,390,000 ກີບ.**

ຕໍ່ກັບການເຂົ້າຮ່ວມກິດຈະກຳໃນຄັ້ງນີ້ເຫັນໄດ້ວ່າ ນອກຈາກຈະເປັນການຊ່ວຍເຫຼືອທາງດ້ານມະນຸດສະທຳດ້ວຍກັນແລ້ວ ສາມອົງການຈັດຕັ້ງມະຫາຊົນ ທຄຕລ ກໍ່ຄື ອຳນວດການຈັດຈ້າງ ທຄຕລ ເວລາໃດກໍ່ໄດ້ເອົາໃຈໃສ່ປະກອບສ່ວນເຂົ້າໃນການ ອຸປະຖຳ - ຊ່ວຍເຫຼືອ ສັງຄົມ ຕາມຄວາມສາມາດຂອງຕົນ ບໍ່ວ່າທັງພາຍໃນ ແລະ ຕ່າງປະເທດ ຖືເປັນຂະບວນການໜຶ່ງທີ່ພົ້ນເດັ່ນ.


0297
0337
0210
0184
0122